ກະຊວງຖະແຫຼງຂ່າວ,ວັດທະນະທຳ
ແລະທ່ອງທ່ຽວ
ຫ້ອງການມໍລະດົກໂລກຫຼວງພະບາງ

| | |
|---|---|
| ຂາເຂົ້າ | ເລກທີ.....78........ |
| | ວັນທີ.21..2..17. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫລງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 116 /ຖວທ

ຄະນະກຳມະການລະດັບຊາດເພື່ອມໍລະດົກໂລກ ນະຄອນຫລວງວຽງຈັນ,ວັນທີ 17 / 02 / 2017

## ຂໍ້ຕົກລົງຂອງລັດຖະມົນຕີ
## ປະທານຄະນະກຳມະການລະດັບຊາດເພື່ອມໍລະດົກໂລກ
## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການລະດັບທ່ອງຖິ່ນເພື່ອມໍລະດົກໂລກ ຫລວງພະບາງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ສະບັບເລກທີ 69/ສພຊ,ລົງວັນທີ 15 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍ ມໍລະດົກແຫ່ງຊາດ, ສະບັບເລກທີ 44 / ສພຊ, ລົງວັນທີ 24 ທັນວາ 2016
- ອີງຕາມ ດຳລັດວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ລະດັບຊາດ ເພື່ອມໍລະດົກໂລກ ສະບັບ ເລກທີ 17/ນຍ,ລົງວັນທີ 05 / 01 / 2017
- ອີງຕາມ ໜັງສືສະເໜີ ຂອງ ເຈົ້າແຂວງຫລວງພະບາງ ສະບັບເລກທີ 25 / ຈຂ.ຫຼບ,ລົງວັນທີ 13 ມີນາ 2016

### ປະທານຄະນະກຳມະການລະດັບຊາດ ເພື່ອ ມໍລະດົກໂລກຕົກລົງ:

ມາດຕາ 1. ແຕ່ງຕັ້ງຄະນະກຳມະການລະດັບທ້ອງຖິ່ນ ເພື່ອ ມໍລະດົກໂລກຫລວງພະບາງ,ຊຶ່ງປະກອບມີ ບັນດາທ່ານດັ່ງນີ້:

1. ທ່ານ ວົງສະຫວັນ ເທບພະຈັນ ຮອງເຈົ້າແຂວງຫລວງພະບາງ ເປັນປະທານ ຄະນະກຳມະການ
2. ທ່ານ ສຸກັນ ບຸນຍົງ ເຈົ້າເມືອງ, ເມືອງ ຫລວງພະບາງ ເປັນຮອງ
3. ທ່ານ ສຸລິທິບ ໝໍ່ຄູນສີນ ຫົວໜ້າພະແນກ ຖວທ ແຂວງ ເປັນຮອງ
4. ທ່ານ ສະເຫວີຍ ສີລາວັນ ຫົວໜ້າຫ້ອງການ ມໍລະດົກໂລກ ຫລວງພະບາງ ເປັນຮອງ ທັງເປັນຜູ້ປະຈຳການ

5. ທ່ານ ຟ້າສະນັ່ນ ທຳມະວົງ ຫົວໜ້າພະແນກ ໂຍທາທິການແລະຂົນສົ່ງແຂວງ ເປັນຄະນະ
6. ທ່ານ ສົມນຶດ ຄົມທະວົງ ຫົວໜ້າພະແນກ ການເງິນແຂວງ ເປັນຄະນະ
7. ທ່ານ ໄຊຍະພັນ ລາສີ ຫົວໜ້າພະແນກ ກະສິກຳ-ປ່າໄມ້ແຂວງ ເປັນຄະນະ
8. ທ່ານ ຈັນທະວົງ ສົມມະຈິດ ຫົວໜ້າພະແນກ ຊສ ແຂວງ ເປັນຄະນະ
9. ທ່ານ ບຸນລ້ວນ ສິງນະຄອນ ຫົວໜ້າພະແນກ ອຸດສາຫະກຳແລະການຄ້າ ແຂວງ ເປັນຄະນະ
10. ທ່ານ ເພັດສະໝອນ ຈັນທະລາດ ຫົວໜ້າພະແນກ ສວຍສາອາກອນ ແຂວງ ເປັນຄະນະ
11. ທ່ານ ຈິດດາວົງ ໄພສີຄຳ ຮອງຫົວໜ້າ ຫ້ອງວ່າການ ປົກຄອງ ແຂວງ ເປັນຄະນະ
12. ທ່ານ ບຸນທັນ ດວງວິໄລແກ້ວ ຮອງປະທານແນວລາວສ້າງຊາດ ເປັນຄະນະ
13. ທ່ານ ພັທ. ດາວັນ ວັນທານຸວົງ ຮອງຫົວໜ້າ ກອງບັນຊາການ ປ ກ ສແຂວງ ເປັນຄະນະ
14. ທ່ານ ບົວພັນ ອຸດົມສິນ ຮອງເຈົ້າເມືອງ,ເມືອງຈອມເພັດ ເປັນຄະນະ
15. ທ່ານ ສາຍຄຳ ສີຫໍລັກ ຮອງຫົວໜ້າອົງການໄອຍະການປະຊາຊົນ ແຂວງ ເປັນຄະນະ
16. ທ່ານ ຄຳຮຸ່ງ ບຸນສະນິດ ຮອງຫົວໜ້າພະແນກ ແຜນການແລະການລົງທຶນແຂວງ ເປັນຄະນະ
17. ທ່ານ ທຸມພັນ ພົມມະຈິດ ຮອງຫົວໜ້າພະແນກ ສຶກສາທິການແລະກິລາ ແຂວງ ເປັນຄະນະ
18. ທ່ານ ແສງຈັນ ໄຊຍະວົງ ຮອງຫົວໜ້າພະແນກສາທາລະນະສຸກແຂວງ ເປັນຄະນະ

ມາດຕາ 2.ຄະນະດັ່ງກ່າວມີໜ້າທີ່ຕົ້ນຕໍດັ່ງນີ້:

1.ສ້າງແຜນເຄື່ອນໄຫວ ແລະ ກົນໄກການປະຕິບັດວຽກງານ ຂອງ ຄະນະກຳມະການລະດັບ ທ້ອງຖິ່ນ ເພື່ອມໍລະດົກໂລກຫລວງພະບາງ.ໂດຍນຳໃຊ້ຫ້ອງການມໍລະດົກໂລກຫລວງພະບາງ ເປັນກອງເລຂາ

2. ຊີ້ນຳການຈັດຕັ້ງປະຕິບັດວຽກງານຄຸ້ມຄອງມໍລະດົກຫລວງພະບາງ ທີ່ ຖືກຮັບຮອງເປັນມໍລະດົກໂລກ

3. ຊີ້ນຳໃນການປະສານງານ ,ອຳນວຍຄວາມສະດວກ ໃນ ການຮ່ວມມື ກັບ ສາກົນ ແລະ Unesco

ມາດຕາ 3. ຄະນະນຳແຂວງຫລວງພະບາງ, ບັນດາພະແນກໃນທົ່ວແຂວງ, ທຸກພາກສ່ວນ ທີ່ກ່ຽວ ຂ້ອງແລະບັນດາທ່ານ ທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບ ຜົນດີ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປະທານຄະນະກຳມະການລະດັບຊາດ ເພື່ອມໍລະດົກໂລກ

ສຈ ດຣ ບໍ່ແສງຄຳ ວົງດາລາ